# ສືບທອດຮີດຄອງປະເພນີບຸນ ເຊັງເມັງດ້ວຍຮູບແບບໃໝ່

ບຸນເຊັງເມັງ ເປັນໜຶ່ງໃນ 24 ຈຸດແບ່ງລະດູການຕາມຈັນທະຄະຕິຈີນ ຊຶ່ງຖືກເອີ້ນວ່າ; ເປັນບຸນສຳຜັດກັບທຳມະຊາດສີຂຽວ ແລະ ເປັນມື້ບຸນໄຫວ້ບູຊາບັນພະບູລຸດທີ່ໄດ້ລ່ວງລັບໄປແລ້ວຂອງຈີນ, ຕາມທຳມະດາຈະຢູ່ລະຫວ່າງວັນທີ 4 - 6 ເມສາຂອງທຸກໆປີ. ໃນໄລຍະນີ້, ລະດູບານໃໝ່ໄດ້ໝູນວຽນມາເຖິງ, ຕົ້ນໄມ້ໃບຫຍ້າໄດ້ແຕກໜໍ່ຈໍ່ແໜງ ແລະ ເຕັມໄປດ້ວຍຄວາມມີຊີວິດຊີວາ, ເປັນມື້ບຸນທີ່ຄົນທັງຫຼາຍໄປສຳຜັດກັບທຳມະຊາດສີຂຽວ.

ບຸນເຊັງເມັງ ຈະມີຮີດຄອງປະເພນີຫຼາຍຢ່າງ, ຮີດຄອງປະເພນີໃນການສະຫຼອງບຸນຂອງທ້ອງຖິ່ນຕ່າງໆ ກໍມີຄວາມແຕກຕ່າງກັນ, ແຕ່ການໄປໄຫວ້ບູຊາບັນພະບູລຸດ ແລະ ສຳຜັດກັບທຳມະຊາດ ເປັນເນື້ອໃນຕົ້ນຕໍຂອງບຸນເຊັງເມັງ ເພື່ອສະແດງໃຫ້ເຫັນເຖິງຄວາມຄິດຮອດຄິດເຖິງບັນພະບູລຸດທີ່ໄດ້ລ່ວງລັບໄປແລ້ວ. ນອກນີ້, ບາງທ້ອງຖິ່ນຂອງຈີນ ຍັງມີປະເພນີກິນ ເຂົ້າໜົມຊິງຖວນ (ເຂົ້າໜົມສີຂຽວ ທີ່ເຮັດດ້ວຍແປ້ງເຂົ້າໜຽວປະສົມກັບນ້ຳກົກາໜາດ, ທໍ່ໃສ້ ແລະ ໜຶ້ງເປັນເຂົ້າໜົມ), ປ່ອຍວ່າວ, ຫຼິ້ນໂອ້ນຊາ, ດຶງເຊືອກ, ປັກສຽບງ່າໄມ້ໂສນ ແລະ ປູກຕົ້ນໄມ້ເປັນຕົ້ນ.

## ໄປສຳຜັດກັບທຳມະຊາດ



ໄປສຳຜັດກັບທຳມະຊາດສີຂຽວ, ຊົມດອກໄມ້ ແລະປ່ອຍວ່າວເປັນຕົ້ນ, ໃນໄລຍະບຸນເຊັງເມັງ, ຄົນທັງຫຼາຍໄປທ່ຽວຫຼິ້ນຢູ່ຕາມພູ ແລະ ທົ່ງນາສີຂຽວ, ໄດ້ສຳຜັດກັບທຳມະຊາດທີ່ຂຽວງາມ.

ຢູ່ເມືອງເກົ່າສີໂຈ່ວ(Xizhou)ນະຄອນຕ້າຫຼີ ແຂວງຢຸນນານ, ທົ່ງນາຂຽວອຸ່ມທຸ່ມ, ມີລົມພັດມາແບບຄ່ອຍໆ, ທົ່ງນາເຂົ້າປຽບເໝືອນຟອງສີຂຽວ. ກຳແພງສີຂາວ ແລະ ຫຼັງຄາສີຂີ້ເທົ່າປະສົມກັບ ຕົ້ນເຂົ້າສີຂຽວ, ໄດ້ດຶງດູດນັກທ່ອງທ່ຽວຈາກແຫ່ງຕ່າງໆໃນທົ່ວປະເທດຈີນ ທີ່ມາສຳຜັດກັບບັນຍາກາດຂອງສາຍລົມໃນລະດູບານໃໝ່.

"ຊາດນີ້ເອົາດອກໄມ້ເນັບໃສ່ຫົວ, ຊາດໜ້າຈະສວຍງາມກວ່າເກົ່າ", ສີມີເອົາດອກໄມ້ເນັບໃສ່ຫົວ ທີ່ເປັນມູນເຊື້ອວັດທະນະທຳນາມມະທຳທີ່ມີປະຫວັດສາດ ຍາວນານ ມາເປັນເວລາ 3.000 ກວ່າປີ ໄດ້ພາກັນຫັນມານິຍົມຂຶ້ນອີກຢູ່ເມືອງເກົ່າຊີງໂຈ່ວ ນະຄອນເວີຍຟາງ ແຂວງຊານຕຸງຈີນ, ທັງເປັນຮີດຄອງປະເພນີເກົ່າແກ່ ແລະ ກໍມີສີສັນຍຸກໃໝ່. ລະດູບານໃໝ່ ທີ່ໝູນວຽນມາເຖິງ, ຊາວໜຸ່ມທັງຫຼາຍໄດ້ມາທ່ຽວໃນເມືອງເກົ່າຊີງໂຈ່ວ, ໄດ້ພາກັນເອົາດອກໄມ້ເນັບໃສ່ຫົວ ແລະ ຖ່າຍຮູບ ເພື່ອເປັນທີ່ລະນຶກ, ຖືວ່າເປັນ "ເຈົ້າຍິງດອກໄມ້".

ກຸ່ມບໍລິສັດ Trip.com ຈຳກັດ ທີ່ເປັນເວັບໄຊຂາຍປີ້ທາງອອນລາຍຂອງຈີນ ໄດ້ເຜີຍແຜ່ "ບົດລາຍງານຄາດຄະເນການທ່ອງທ່ຽວໃນໄລຍະບຸນເຊັງເມັງ ປີ 2024" ໂດຍສະແດງໃຫ້ເຫັນວ່າ: ໃນໄລຍະພັກບຸນເຊັງເມັງປີນີ້, ແຂວງຊານຕຶງຈີນ ໄດ້ເປັນອັນດັບ 4 ໃນການລຽງລຳດັບເຂດແຂວງ ຕ້ອນຮັບນັກທ່ອງທ່ຽວໃນທົ່ວປະເທດຈີນ, ຄາດວ່າ: ປະລິມານການຈອງປີ້ລ່ວງໜ້າຈະເພີ່ມຂຶ້ນ 866% ເມື່ອທຽບໃສ່ບຸນເຊັງເມັງປີຜ່ານມາ. ຍ້ອນວ່າການທ່ອງທ່ຽວແບບຂັບລົດເອງໄດ້ເພີ່ມຂຶ້ນ ແລະ ນັກທ່ອງທ່ຽວຕ່າງປະເທດ ໄດ້ເຂົ້າມາທ່ຽວແຂວງຢຸນນານເພີ່ມຂຶ້ນ, ຈຳນວນນັກທ່ອງທ່ຽວທີ່ກຽມຈະໄປທ່ຽວແຂວງຢຸນນານ ໃນໄລຍະພັກບຸນເຊັງເມັງ ໄດ້ເພີ່ມຂຶ້ນ 96% ເມື່ອທຽບໃສ່ບຸນເຊັງເມັງປີຜ່ານມາ. ນອກນີ້, ການໄປຮຽນວິທີຜະລິດແກ້ວ ແລະ ເຮັດເຄື່ອງປັ້ນດິນເຜົາ ຢູ່ນະຄອນຈິງເຕີເຈິ້ນແຂວງຈຽງຊີ ກໍໄດ້ຮັບຄວາມນິຍົມຊົມຊອບຈາກຊາວໜຸ່ມທັງຫຼາຍ. ໃນໄລຍະພັກບຸນເຊັງເມັງປີນີ້, ດັດສະນີໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວຂອງນະຄອນຈິງເຕີເຈິ້ນ ເພີ່ມຂຶ້ນ 331% ເມື່ອທຽບໃສ່ບຸນເຊັງເມັງປີຜ່ານມາ.

## ອາຫານພື້ນເມືອງໄດ້ຮັບຄວາມນິຍົມຊົມຊອບຫຼາຍ



ບຸນເຊັງເມັງ ໃກ້ຈະໝູນວຽນມາເຖິງ, ການບໍລິໂພກເຂົ້າໜົມຊິງຖວນ ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າຫຼາຍ. ໂຕເລກຂໍ້ມູນສະແດງໃຫ້ເຫັນວ່າ: ດັດສະນີເຂົ້າໜົມຊິງຖວນ ໄດ້ບັນລຸເຖິງ ,38 ລ້ານ ແລະ ໄດ້ເພີ່ມຂຶ້ນ 424% ໃນໜຶ່ງອາທິດຜ່ານມາ.

ຢູ່ນະຄອນເສິງຕູ່ແຂວງເສສວນຈີນ, ນອກຈາກ ເຂົ້າໜົມຊິງຖວນ ທີ່ມີຫຼາຍລົດຊາດແຊບແລ້ວ, ຍັງມີຊຸກີຢາກີເຂົ້າໜົມຊິງຖວນ, ເຄັກຊິງຖວນ ແລະ ນົມຊາຊິງຖວນ. ຍອດປະລິມານຈຳໜ່າຍເຄັກຊິງຖວນ ຂອງຮ້ານກາເຟແຫ່ງໜຶ່ງ ໃນນະຄອນເສິງຕູ່ ໄດ້ບັນລຸເຖິງ 500 ຫາ 600 ກ້ອນ, ໄດ້ຂາຍໄປ ທົ່ວປະເທດຈີນ. ນອກນີ້, ຍັງມີຮ້ານຄ້າຫຼາຍແຫ່ງໄດ້ຈັດກິດຈະກຳຊວນລູກຄ້າເຮັດ ເຂົ້າໜົມຊິງຖວນ, ກໍໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າຫຼາຍ.

## ການໄຫວ້ບູຊາທາງ ອອນລາຍໄດ້ກາຍເປັນຄວາມນິຍົມໃໝ່



ຫວ່າງມໍ່ໆມານີ້, ນະຄອນຫຼວງປັກກິ່ງ ໄດ້ຈັດກິດຈະກຳໄຫວ້ບູຊາບັນພະບູລຸດທາງອອນລາຍໃນໄລຍະບຸນເຊັງເມັງ ໂດຍສົ່ງເສີມໃຫ້ຄົນທັງຫຼາຍໄຫວ້ບູຊາບັນພະບູລຸດແບບມາລະຍາດທາງອອນລາຍ ຄື: ເທຍັ້ນເຫຼົ້າຈອກໜຶ່ງ, ມອບດອກໄມ້ພວງໜຶ່ງ, ຫຼິ້ນດົນຕີຕອນໜຶ່ງ ຫຼື ຂຽນຈົດໝາຍກ້ານໜຶ່ງ ໂດຍຜ່ານທາງອອນລາຍ ເພື່ອບັນພະບູລຸດທີ່ໄດ້ລ່ວງລັບໄປແລ້ວ.

ໃນຊຸມປີຜ່ານມາ, ພາຍໃຕ້ການກະຕຸກຊຸກຍູ້ຂອງເຕັກນິກອິນເຕີເນັດ, ຄົນທັງຫຼາຍໄດ້ໄຫວ້ບູຊາບັນພະບູລຸດໂດຍຜ່ານທາງອອນລາຍນັບມື້ນັບຫຼາຍຂຶ້ນ.ນອກນີ້, ການເຮັດປື້ມທີ່ລະນຶກ ແລະ ການປູກຕົ້ນໄມ້ ກໍເປັນວິທີລະນຶກໜຶ່ງ ທີ່ໄດ້ຮັບຄວາມນິຍົມຊົມຊອບຈາກຊາວຈີນ ນັບມື້ນັບຫຼາຍຂຶ້ນ.

ຂ່າວ: ໜັງສືພິມລາຍວັນຢຸນນານ, ຂ່າວຊິນຕຸ້ງ, ຂ່າວທົງຊິນ, ຂ່າວຫຽນຢັນ

## ຄົນດຽວກໍມີລະດູບານໃໝ່ຂອງຕົນ

ປຶ້ມ "ຄົນດຽວກໍມີລະດູບານໃໝ່ຂອງຕົນ" ເປັນປຶ້ມກະວີຫົວໜຶ່ງສຳລັບຄົນທຳມະດາສາມັນ. ປຶ້ມຫົວນີ້ໄດ້ຄັດຈ້ອນບົດກະວີ 200 ກວ່າບົດຂອງຜູ້ຂຽນທຳມະດາສາມັນ, ພວກເຂົາເຈົ້າຈະເປັນຊາວນາ, ກຳມະກອນກໍ່ສ້າງ, ຜູ້ສົ່ງອາຫານດ່ວນ, ແມ່ຍິງໃນບ້ານ ຫຼື ຜູ້ອາຍຸສູງ. ຜູ້ຂຽນບົດກະວີເຫຼົ່ານີ້ ແມ່ນມາຈາກທ້ອງຖິ່ນຕ່າງໆ, ມີອາຊີບຕ່າງກັນ ແລະ ອາຍຸຕ່າງກັນ, ໃນຊີວິດປະຈຳວັນ, ພວກເຂົາເຈົ້າມີຖານະຕ່າງກັນ, ແຕ່ພວກເຂົາເຈົ້າມີຄວາມສຳຄັນເທົ່າທຽມກັນທາງດ້ານວັນນະຄະດີ.

ທ່ານ ວາງຈີປົງ ອາຍຸ 54 ປີ ມາຈາກນະຄອນຄຸນຊານ ແຂວງຈຽງຊູຈີນ, ເປັນຜູ້ສົ່ງອາຫານດ່ວນຄົນໜຶ່ງ, ທ່ານ ໄດ້ຂຽນບົດກະວີພາດຫົວຂໍ້ "ຄົນທີ່ແຂ່ງກັບເວລາ" ບົນພື້ນຖານປະສົບການຂອງຕົນວ່າ: "ແຂ່ງກັບອາກາດ, ແຂ່ງກັບລົມ, ແຂ່ງກັບຟ້າຝົນລົມແດງ. ຜູ້ທີ່ແຂ່ງກັບເວລາຈະບໍ່ສົນໃຈນຳ 4 ລະດູການ, ມີແຕ່ປ້າຍນີ້ ກັບ ປ້າຍໜ້າ." "ຄົນດຽວກໍມີລະດູບານໃໝ່ຂອງຕົນ" ໄດ້ຄັດຈ້ອນເອົາບົດກະວີ 15 ບົດຂອງທ່ານວາງຈີປົງ. ໃນຊຸມປີຜ່ານມາ, ທ່ານໄດ້ຂຽນບົດກະວີທັງໝົດ 3.000 ກວ່າບົດ.

ອາປູກຜັກຜູ້ໜຶ່ງ ທີ່ມາຈາກນະຄອນເຕີໂຈ່ວ ແຂວງຊານຕຶງ ໄດ້ຂຽນວ່າ: "ບໍ່ວ່າຈະມີໃຜຢືນຢູ່ຄຽງຂ້າງຂ້ອຍຫຼືບໍ່, ນີ້ກໍແມ່ນຫົວຄຳສຳລັບຂ້ອຍຄົນດຽວ. ປັດຈຸບັນນີ້, ຂ້ອຍແມ່ນພະລາຊີນີເຕັ້ນລຳ, ເຕັ້ນກັບລົມ, ເຕັ້ນກັບນ້ຳ ແລະ ເຕັ້ນໃນທ່າມກາງແສງລັດສະໝີສີຄຳ, ປຽບເໝືອນນົກກາງເຂນທີ່ຢືນຢູ່ເທິງຄັນນາ." ອາຜູ້ນີ້ ໄດ້ຂຽນບົດກະວີຢູ່ຕາມທົ່ງນາ ແລະ ຂຽນໃນຍາມຂາຍຜັກ. ອາ ໄດ້ພັນລະນາການຂັບລົດສາມລໍ້ຂອງຕົນ ເປັນເລື່ອງໂລແມນຕິກຂອງຜູ້ດຽວ.

ທ່ານ ຮານຊີງໂລ ນັກຂຽນຈີນ ໄດ້ຂຽນຄຳນຳໃຫ້ປຶ້ມຫົວນີ້ວ່າ: "ນີ້ອາດຈະແມ່ນທາດແທ້ຂອງບົດກະວີ, ບົດກະວີກັບຄືນຮອດແຫຼ່ງກຳເນີດຂອງຕົນແລ້ວ."

ບົດກະວີແບບທຳມະຊາດ, ແຕ່ເຕັມໄປດ້ວຍຄວາມຈິງໃຈຈົນກວ່າເປັນຕົວໜັງສືແບບທຳມະດາເຫຼົ່ານີ້ ໄດ້ເຕືອນພວກເຮົາວ່າ: ໃນຊູ່ມື້ນີ້, ຍັງມີຄົນຂຽນບົດກະວີຢູ່, ຜູ້ຂຽນອາດຈະຢູ່ຄຽງຂ້າງເຮົາ ແລະ ບາງເທື່ອຈະແມ່ນເຮົາເອງ.

## ນັກທ່ອງທ່ຽວໄທທີ່ມາທ່ຽວຈີນ, ໂດຍຜ່ານທາງລົດໄຟ ລາວ-ຈີນ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ

ວັນທີ 1 ມີນາ 2024, ສັນຍາວ່າດ້ວຍຈີນ ແລະ ໄທ ຍົກເວັ້ນວີຊາໃຫ້ແກ່ຜູ້ຖືປັດສະປໍທົ່ວໄປ ເຊິ່ງກັນ ແລະ ກັນ ເລີ່ມມີຜົນບັງຄັບໃຊ້ຢ່າງເປັນທາງການ. ເມື່ອຮອດວັນທີ 31 ມີນາຜ່ານມາ, ສັນຍາສະບັບດັ່ງກ່າວ ມີຜົນບັງຄັບໃຊ້ຄົບຮອບເດືອນໜຶ່ງ, ດ່ານກວດກາຊາຍແດນບໍ່ຫານຂອງຈີນ ໄດ້ກວດກາ ແລະ ຮັບນັກທ່ອງທ່ຽວໄທ 2.100 ເທື່ອຄົນ. ໃນນັ້ນ, ດ່ານກວດກາຕາມທາງລົດໄຟ ລາວ-ຈີນ ຂອງດ່ານບໍ່ຫານ ໄດ້ກວດກາ ແລະ ຮັບ ນັກທ່ອງທ່ຽວໄທ 629 ເທື່ອຄົນ, ເພີ່ມຂຶ້ນ 750% ເມື່ອທຽບໃສ່ເດືອນກຸມພາຜ່ານມາ.

ທ່ານ ຕຣີທາ ສຸເທບ ນັກທ່ອງທ່ຽວໄທ ເຊື້ອສາຍຈີນ ທີ່ໄປຢາມຍາດພີ່ນ້ອງຢູ່ຈີນ ເປັນຄັ້ງທີ 3 ກ່າວວ່າ: "ລັດຖະບານຈີນ ໄດ້ຍົກເວັ້ນ ວີຊາໃຫ້ແກ່ພວກເຮົາ ເຊິ່ງໄດ້ຫຼຸດຂັ້ນຕອນ ແລະ ເວລາໃນການແລ່ນ ວີຊາ, ດຽວນີ້ມີຄວາມສະດວກວ່ອງໄວກວ່າແຕ່ກ່ອນຫຼາຍ."

ທ່ານ ອ້າຍຊຽງຮາ ຜູ້ນຳທ່ຽວບໍລິສັດທ່ອງທ່ຽວສາກົນແຂວງຢຸນນານ ກ່າວວ່າ: ປັດຈຸບັນ, ວຽກງານຕ້ອນຮັບນັກທ່ອງທ່ຽວໄທ ຂອງບໍລິສັດຕົນໄດ້ຈັດວາງໄປເຖິງເດືອນຕຸລາປີນີ້.

ຂ່າວ: Zhang Yanqun, Huang Yuanfei, Lei Yu, Zhong Tao

## ໃຊ້ຊີວິດທີ່ດີງາມຂອງແຂວງຢຸນນານ



ວັນທີ 28 ມີນານີ້, "ຊີວິດທີ່ດີງາມຂອງແຂວງຢຸນນານ·ເທດສະການວັດທະນະທຳຊາ ແລະ ກາເຟປີ 2024" ໄດ້ຈັດຂຶ້ນຢູ່ນະຄອນຄຸນໝິງແຂວງຢຸນນານ.

ເທດສະການຄັ້ງນີ້ ໄດ້ຈັດໃຫ້ມີເຂດວາງສະແດງໃຫຍ່ຕາມ 5 ຫົວຂໍ້ຄື: ກາເຟ, ຊາ, ດອກໄມ້ສົດ, ອາຫານ ແລະ ນໍລະດີກວັດທະນະທຳນາມມະທຳ ເຊິ່ງໄດ້ວາງສະແດງວັດທະນະທຳ ແລະ ຜະລິດຕະພັນທີ່ມີເອກະລັກພິເສດຂອງແຂວງຢຸນນານ. ໃນຂະນະດຽວກັນ, ກິດຈະກຳຫຼາຍຢ່າງ ທີ່ຈັດຂຶ້ນຢູ່ນະຄອນຄຸນໝິງ, ນະຄອນຜູເອີ, ນະຄອນປາວຊານ, ນະຄອນຕ້າຫຼີ, ນະຄອນລິນຊາງ, ກິ່ງແຂວງສິບສອງພັນນາ ແລະ ນະຄອນເຕີຫົງ ກໍຈະດຳເນີນໄປພາຍໃນປີນີ້, ຮ່ວມກັນວາງສະແດງຜະລິດຕະພັນ ທີ່ດີເດັ່ນຂອງແຂວງຢຸນນານ.

ຂ່າວ/ພາບ: Guo Yao, Han Chengyuan

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນາ ນ)

ynzhanba@163.com
laos.yunnangateway.com